

# ຄວາມຮັບຜິດຊອບຂອງອົງການແມ່ນ້ຳຂອງສາກົນ ໃນການເຊື່ອມ ບົດບາດ ຍິງ-ຊາຍ ເຂົ້າໃນການພັດທະນາ ຊັບພະຍາກອນນ້ຳ

## ໃນພາກພື້ນອ່າງແມ່ນ້ຳຂອງຕອນລຸ່ມ

Cambodia • Lao PDR • Thailand • Viet Nam

For sustainable development



# ນະໂຍບາຍ ແລະ ຍຸດທະສາດ ກ່ຽວກັບ ບົດບາດ ຍິງ-ຊາຍ

ໃນອົງການແມ່ນ້ຳຂອງສາກົນ, ການປະສົບຜົນສຳເລັດ ໃນການເຮັດໃຫ້ເກີດຄວາມສົມດຸນ ລະຫວ່າງ ແນວທາງ ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຂອງການພັດທະນາ ໄດ້ຖືກຖືວ່າເປັນບັນຫາທີ່ມີຄວາມສຳຄັນ ຫລາຍຂຶ້ນ. ເປົ້າຫມາຍດັ່ງກ່າວມາຂ້າງເທິງນັ້ນ ໄດ້ຖືກກຳຫນົດ ໃຫ້ເປັນຫນຶ່ງໃນບັນດາເປົ້າຫມາຍຍຸດທະສາດທີ່ປະກອບເປັນພື້ນຖານອັນສຳຄັນ ໃນວິໃສທັດຂອງອົງການແມ່ນ້ຳຂອງເພື່ອໃຫ້ກາຍເປັນອ່າງແມ່ນ້ຳຂອງ ທີ່ມີ ເສດຖະກິດທີ່ອຸດົມຮັ່ງມີ, ມີຄວາມເປັນທຳໃນສັງຄົມ ແລະ ມີສິ່ງແວດລ້ອມທີ່ດີ, ການເອົາໃຈໃສ່ທາງດ້ານສັງຄົມໄດ້ເກີດຂຶ້ນ ແລະ ກາຍເປັນປັດໃຈສຳຄັນໃນການບັນລຸເປົ້າຫມາຍຂອງການວາງແຜນ ແລະ ການພັດທະນາຊັບພະຍາກອນທຳມະຊາດ. ໃນທ່າມກາງປັດໃຈທີ່ສຳຄັນຕ່າງໆເຫລົ່ານັ້ນ, ບົດບາດ ຍິງ-ຊາຍ ກໍ່ໄດ້ກາຍເປັນປະເດັນທີ່ສຳຄັນອັນຫນຶ່ງ. ສຳຫລັບບັນດາປະເທດພາຄີສະມາຊິກ ຂອງອົງການແມ່ນ້ຳຂອງ, ບັນຫາ ບົດບາດ ຍິງ-ຊາຍ ກໍ່ແມ່ນບູລິມະສິດລະດັບຊາດອັນຫນຶ່ງເພື່ອເຮັດໃຫ້ເກີດຄວາມສະເຫມີພາບໃນຜົນປະໂຫຍດ ດ້ານ ເສດຖະກິດ ແລະ ສັງຄົມຂອງການພັດທະນາ. ປະເດັນເລື້ອງ ບົດບາດ ຍິງ-ຊາຍ ໄດ້ຮັບການເນັ້ນຫນັກໃນຖານະຕົວແປທີ່ສຳຄັນ ທາງດ້ານເສດຖະກິດ-ສັງຄົມທີ່ມີຄວາມຈຳເປັນຕ້ອງໄດ້ຮັບການເອົາໃຈໃສ່ ໃນທຸກໆ ຂະບວນການ ຂອງການພັດທະນາແຜນງານ ຂອງອົງການແມ່ນ້ຳຂອງ.

ດ້ວຍເຫດນີ້, ຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບ ບົດບາດ ຍິງ-ຊາຍ ຂອງອົງການແມ່ນ້ຳຂອງ ຈຶ່ງໄດ້ຖືກ ສ້າງຂຶ້ນ ແລະໄດ້ຮັບການຮັບຮອງຈາກລັດຖະບານຂອງບັນດາປະເທດພາຄີສະມາຊິກໂດຍຜ່ານກອງປະຊຸມສະພາມົນຕີ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ໃນປີ 1998 ແລະ ປີ 2000 ຕາມລຳດັບ.

# ນະໂຍບາຍ ບົດບາດ ຍິງ-ຊາຍ ຂອງ ຄະນະກຳມາທິການ ແມ່ນ້ຳຂອງສາກົນ

ການຄຸ້ມຄອງ ຊັບພະຍາກອນນ້ຳ ແບບປະສົມປະສານທີ່ປະສົບຜົນສຳເລັດນັ້ນ, ມັນຮຽກຮ້ອງໃຫ້ມີວິທີການແບບເຊື່ອມໂຍງ ແລະ ປະສົມປະສານບັນດາຂະແໜງການຕ່າງໆ ເຂົ້າໃນວຽກງານການວາງແຜນ, ການພັດທະນາ, ການນຳໃຊ້ ແລະ ການປົກປັກຮັກສາຊັບພະຍາກອນນ້ຳ.  ວິທີການແບບປະສົມປະສານດັ່ງກ່າວ, ມີລັກສະນະການເຊື່ອມໂຍງດ້ານ ສະຖາບັນ, ການຄຸ້ມຄອງ, ສັງຄົມ, ບົດບາດ ຍິງ-ຊາຍ ແລະເສດຖະກິດເຂົ້າກັບການວິເຄາະ ແລະ ແກ້ໄຂບັນຫາດ້ານເຕັກນິກວິຊາການ, ການໃຫ້ໂອກາດສຳຫຼັບການພັດທະນາທີ່ຕອບສະໜອງຕໍ່ຄວາມຕ້ອງການຕ່າງໆຂອງໝົດທຸກຄົນ, ທັງຍິງ  ແລະ ຊາຍ, ບົນພື້ນຖານຄວາມສະເໝີພາບ.

ຕາມການເຫັນດີ ຂອງບັນດາປະເທດພາຄີສະມາຊິກທັງສີ່ໃນນະໂຍບາຍ ບົດບາດ ຍິງ-ຊາຍ, ຈຸດປະສົງ ເປົ້າໝາຍຂອງນະໂຍບາຍນີ້ແມ່ນເພື່ອກຳໜົດວິທີທາງຫລັກໆຂອງຄະນະກຳມາທິການ ແມ່ນ້ຳຂອງສາກົນ ເພື່ອແກ້ໄຂບັນຫາ ບົດບາດ ຍິງ-ຊາຍ ໃນການພັດທະນານ້ຳ ແລະຊັບພະຍາກອນ ທີ່ກ່ຽວຂ້ອງ ໃນພາກພື້ນອ່າງແມ່ນ້ຳຂອງຕອນລຸ່ມ. ■

## ເຫດຜົນ ແລະ ບ່ອນອີງ



## ຂອບເຂດຂອງນະໂຍບາຍ

ຈຸດເນັ້ນໜັກ ຂອງຄະນະກຳມາທິການ ແມ່ນ້ຳຂອງສາກົນ ແມ່ນກ່ຽວກັບ “ບົດບາດ ຍິງ-ຊາຍ” ຫລາຍກ່ວາກ່ຽວກັບ “ແມ່ຍິງ”. ບົດບາດ ຍິງ-ຊາຍ ແມ່ນອີງໃສ່ບົດບາດ, ຄວາມຮັບຜິດຊອບ, ຄວາມຕ້ອງການ, ຜົນປະໂຫຍດ, ແລະ ຄວາມອາດສາມາດ ຂອງທັງສອງເພດ, ຍິງ ແລະ ຊາຍ. ສິ່ງເຫລົ່ານີ້, ໄດ້ຮັບອິດທິພົນມາຈາກປັດໃຈທາງດ້ານສັງຄົມ ແລະ ວັດທະນະທຳ. ເພາະສະນັ້ນ, ຄຳວ່າ “ບົດບາດ ຍິງ-ຊາຍ” ຈຶ່ງບໍ່ແມ່ນ ຄວາມໝາຍ ດຽວກັນກ່ຽວກັບຄຳວ່າ “ເພດ ຍິງ-ຊາຍ” ຊຶ່ງອີງໃສ່ ຄວາມແຕກຕ່າງທາງດ້ານຊີວະສາດ ຢ່າງສະເພາະເຈາະຈົງຂອງເພດຍິງ ແລະ ຊາຍ.

ອີງໃສ່ເງື່ອນໄຂຂອງພູມີພາກແມ່ນ້ຳຂອງ, ການຮ່ວມມືພາຍໃຕ້ຂອບເຂດ ຂອງຄະນະກຳມາທິການ ແມ່ນ້ຳຂອງສາກົນ ແມ່ນແນໃສ່ການໄດ້ຮັບຜົນສູງສຸດ ໃນການພັດທະນາແບບປະສົມປະສານ ກ່ຽວກັບນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງຕ່າງໆຢູ່ໃນພາກພື້ນອ່າງແມ່ນ້ຳຂອງຕອນລຸ່ມ, ໂດຍວິທີທາງແບບຍືນຍົງ ແລະ ເພື່ອປັບປຸງຄຸນນະພາບຊີວິດຂອງປະຊາຊົນຂອງບັນດາປະເທດພາຄີສະມາຊິກ. ທຳມະດາ, ຜູ້ຊາຍ ແລະ ແມ່ຍິງ ມີການສະແດງອອກໃນບົດບາດທີ່ແຕກຕ່າງກັນ ໃນການພັດທະນາ, ແລະ ດ້ວຍເຫດນີ້ ພວກເຂົາເຈົ້າຈຶ່ງມີຄວາມຕ້ອງການ, ຜົນປະໂຫຍດ, ການເຂົ້າເຖິງ ແລະ ການຄຸ້ມຄອງຊັບພະຍາກອນ ທີ່ແຕກຕ່າງກັນ. ທັດສະນະຄະຕິ ກ່ຽວກັບບົດບາດ ຍິງ-ຊາຍ ແມ່ນຮຽກຮ້ອງ ເພື່ອໃຫ້ມີການຮັບປະກັນວ່າ: ຄວາມຕ້ອງການສະເພາະຂອງແມ່ຍິງ ແລະ ຜູ້ຊາຍ, ຄວາມອ່ອນແອ ແລະ ຄວາມສາມາດ ໄດ້ຮັບຮູ້ ຂອງພວກເຂົາ ແມ່ນໄດ້ຖືກກຳໜົດ ແລະ ແກ້ໄຂຢ່າງແທດເໝາະ.

## ເປົ້າໝາຍ

ເປົ້າໝາຍລວມຂອງນະໂຍບາຍ ບົດບາດ ຍິງ-ຊາຍ ແມ່ນເພື່ອເຊື່ອມວິໃສທັດ ບົດບາດ ຍິງ-ຊາຍ ເຂົ້າໃນທຸກຂະບວນການໃນການພັດທະນາ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ, ຮັບປະກັນໃຫ້ ທຸກໆໂຄງການພັດທະນາ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ເກີດຜົນປະໂຫຍດແກ່ແມ່ຍິງ ແລະ ຜູ້ຊາຍ ໂດຍທີ່ທຽມກັນ, ແລະ ໂດຍສອດຄ່ອງກັບຄວາມຕ້ອງການທີ່ແຕກຕ່າງກັນຂອງພວກເຂົາ, ແລະ ດ້ວຍການປະກອບສ່ວນ ແລະ ການມີສ່ວນຮ່ວມ ຢ່າງເທົ່າທຽມກັນຂອງແມ່ຍິງ ແລະ ຜູ້ຊາຍ ໃນທຸກລະດັບ.



# ແນວທາງ ແລະ ຫລັກການ

1. ຄວາມຍຸດຕິທຳ ແລະ ຄວາມສະເໝີພາບ ທາງດ້ານ ບົດບາດ ຍິງ-ຊາຍ ແມ່ນໄດ້ຖືກພິຈາລະນາ ໃຫ້ເປັນພາກສ່ວນທີ່ສຳຄັນອັນຫນຶ່ງ ຂອງໝົດທຸກ ແຜນງານ, ໂຄງການ ແລະ ກິດຈະກຳຂອງຄະນະກຳມາທິການແມ່ນ້ຳຂອງສາກົນ.

2. ການບັນລຸເປົ້າໝາຍຂອງການພັດທະນາ ຢ່າງມີປະສິດທິຜົນ ແລະ ປະສິດທິພາບນັ້ນ, ມັນມີ ຄວາມຕ້ອງການການຍອມຮັບວ່າ: ທຸກໆກິດຈະກຳຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ສິ່ງຜົນຕໍ່ແມ່ຍິງ ແລະ ຜູ້ຊາຍ ຢ່າງແຕກຕ່າງກັນ ແລະ ເພາະສະນັ້ນ ຄວາມແຕກຕ່າງ ຂອງພວກເຂົາ ບໍ່ວ່າຈະເປັນໃນດ້ານແນວຄວາມຄິດ, ຄວາມຕ້ອງການ, ຜົນປະໂຫຍດ, ບົດບາດ ແລະ ຊັບພະຍາກອນແມ່ນຄວນໄດ້ຖືກເອົາໃຈໃສ່ ພິຈາລະນາໃນທຸກໆຂັ້ນຕອນ.

3. ຄວາມຍຸດຕິທຳ ແລະ ຄວາມສະເໝີພາບ ທາງດ້ານ ບົດບາດ ຍິງ-ຊາຍ ມີຄຸນຄ່າທີ່ສຳຄັນທີ່ຕ້ອງ ໄດ້ເສີມສ້າງໃຫ້ມີຄວາມເຂັ້ມແຂງ ແລະ ສະທ້ອນໃຫ້ເຫັນໃນທາງເລືອກຕ່າງໆ ຂອງການ ພັດທະນາ ແລະ ການຈັດຕັ້ງປະຕິບັດຕົວຈິງຂອງສະຖາບັນຕ່າງໆ. ■

# ຍຸດທະສາດ ແລະ ກິດຈະກຳ ເພື່ອສົ່ງຜົນ ໃຫ້ໄດ້ຮັບຜົນສຳເລັດ ຂອງນະໂຍບາຍ ບົດບາດ ຍິງ-ຊາຍ

ການອະນຸຫມັດ ຍຸດທະສາດ ບົດບາດ ຍິງ-ຊາຍ ຂອງຄະນະກຳມະທິການແມ່ນ້ຳຂອງສາກົນ ໂດຍບັນດາປະເທດພາຄີສະມາຊິກ ໃນປີ 1998 ເປັນການເພີ້ມຄວາມຮັບຜິດຊອບ ແລະ ພັນທະຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ ໃນຖານະທີ່ເປັນອົງການພັດທະນາ ແລະ ຄຸ້ມຄອງບໍລິຫານຂົງເຂດ ອ່າງແມ່ນ້ຳອັນຫນຶ່ງ ແລະ ເປັນຜູ້ດຳເນີນການເຮັດໃຫ້ ນະໂຍບາຍ ບົດບາດ ຍິງ-ຊາຍ ປະສົບຜົນສຳເລັດ.



**ເພື່ອບັນລຸເປົ້າໝາຍຂອງອົງການ, ຄະນະກຳມາທິການແມ່ນ້ຳຂອງສາກົນ ຈະຕ້ອງ:**

1. ຮັບປະກັນຄວາມສະເໝີພາບ ລະຫວ່າງ ພະນັກງານ ຍິງ ແລະ ຊາຍ ດ້ານເງື່ອນໄຂຕ່າງໆ ໃນການ ຮັບພະນັກງານ, ການເລື່ອນຊັ້ນ, ການໃຫ້ສິດ, ການຝຶກອົບຮົມ ແລະ ການປະກອບອາຊີບ.

2. ສຸມທຸກກຳລັງແຮງ ເພື່ອເຮັດໃຫ້ຂໍ້ມູນຕ່າງໆ ມີການແຍກຈຳນວນ ຍິງ-ຊາຍ ຢ່າງລະອຽດ ເພື່ອຕອບສະໜອງຄວາມຕ້ອງການໃນການ ປະເມີນຜົນ ແລະ ວາງແຜນໂຄງການ ແລະ ເພື່ອລວມເອົາການ ວິເຄາະ ບົດບາດ ຍິງ-ຊາຍ ເຂົ້າໃນການວາງແຜນ, ການຈັດຕັ້ງ ປະຕິບັດ, ການຕິດຕາມ ແລະ ການປະເມີນຜົນໂຄງການ.

3. ເພີ້ມຄວາມຮູ້ ແລະ ຄວາມສາມາດໃຫ້ແກ່ບັນດາພະນັກງານ ແລະ ນັກວິຊາການຂອງກົມກອງຂະແໜງການ ທີ່ກ່ຽວຂ້ອງ ໃນການ ເອົາໃຈໃສ່ກ່ຽວກັບຄວາມແຕກຕ່າງ ທາງດ້ານສັງຄົມລະຫວ່າງ ຊາຍ ແລະ ຍິງ ໃນການອອກແບບ, ການຈັດຕັ້ງປະຕິບັດ, ແລະ ການປະເມີນຜົນໂຄງການ.

4. ດຳເນີນການທົບທວນຢ່າງເປັນລະບົບ, ແລະ ສ້າງໃຫ້ມີຫລັກການ ການດຳເນີນງານຂອງສະຖາບັນ ຊຶ່ງເປັນສິ່ງຮັບປະກັນວ່າ ຄວາມ ຕ້ອງການຂອງ ເດັກຊາຍ ແລະ ເດັກຍິງ, ຊາຍ ແລະ ຍິງ, ແມ່ນໄດ້ ຮັບການ ຕອບສະໜອງຢ່າງເທົ່າທຽມກັນໃນການວາງແຜນ ກິດຈະກຳການພັດທະນາ ຕ່າງໆ ຂອງຄະນະ ກຳມາທິການ ແມ່ນ້ຳຂອງສາກົນ. ■

# ຍຸດທະສາດ ບົດບາດ ຍິງ-ຊາຍ
# ຂອງຄະນະກຳມາທິການ ແມ່ນ້ຳຂອງສາກົນ

ຍຸດທະສາດ ບົດບາດ ຍິງ-ຊາຍ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ມີຈຸດມຸ້ງໝາຍ ເພື່ອຈະເຊື່ອມສານ ແລະ ສົ່ງເສີມແນວຄວາມຄິດ ບົດບາດ ຍິງ-ຊາຍ ເຂົ້າໃນແນວທາງນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການ ຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ.ຍຸດທະສາດດັ່ງກ່າວນີ້ ແມ່ນຖືກສ້າງຂຶ້ນ ເພື່ອປະກອບສ່ວນ ແລະ ສະໜັບສະໜູນ ຍຸດທະສາດອື່ນໆທີ່ມີຈຸດປະສົງ ເພື່ອບັນລຸ ເປົ້າໝາຍຂອງການພັດທະນາແບບຍືນຍົງ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ. ພາຍໃຕ້ຂອບເຂດ ແລະ ຫລັກການຂອງແຜນຍຸດທະສາດ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ແມ່ນລວມມີການສ້າງນະໂຍບາຍ ຂອງອົງການເພື່ອເຊື່ອມປັດໃຈທາງດ້ານສັງຄົມ ເຂົ້າໃນກິດຈະກຳຂອງການພັດທະນາ ກ່ຽວກັບນ້ຳ ແລະ ຊັບພະຍາກອນ ທີ່ກ່ຽວຂ້ອງອື່ນໆ. ການຊຸກຍູ້ສົ່ງເສີມ ການປະຕິບັດ ນະໂຍບາຍຫລົ່ານັ້ນ ໂດຍຜ່ານຂະບວນການ ສ້າງຈິດສຳນຶກ ແລະ ການສ້າງ ຄວາມສາມາດ ໂດຍຜ່ານການເຜີຍແຜ່ ແລະ ແນະນຳກ່ຽວກັບເຄື່ອງມື ແລະ ວິທີການ ຕ່າງໆທີ່ເປັນຕົວຊ່ວຍໃນວຽກງານການຈັດການ ແລະ ຄຸ້ມຄອງ.



(ອົງປະກອບຫລັກ)

1 ການສ້າງນະໂຍບາຍ ບົດບາດ ຍິງ-ຊາຍ.

2 ການສະໜັບສະໜູນຈາກບັນດາການນຳ ແລະ ຜູ້ບໍລິຫານຂັ້ນສູງ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ.

3 ການສ້າງຈິດສຳນຶກ ກ່ຽວກັບ ບົດບາດ ຍິງ-ຊາຍ ໃນອົງການ.

4 ການເສີມສ້າງຄວາມອາດສາມາດດ້ານ ບົດບາດ ຍິງ-ຊາຍ ແລະ ການພັດທະນາ.

5 ເຮັດໃຫ້ໂຄງຮ່າງການຈັດຕັ້ງ ແລະ ລະບຽບຫລັກການຕ່າງໆ ຂອງອົງການໃຫ້ມີການເອົາໃຈໃສ່ ກ່ຽວກັບ ບົດບາດ ຍິງ-ຊາຍ.

6 ການຈັດຫາເຄື່ອງມື ແລະ ວິທີຈັດຕັ້ງປະຕິບັດທີ່ສອດຄ່ອງ ແລະ ຈຳເປັນສຳຫລັບການປະຕິບັດການພັດທະນາ ທີ່ມີຄວາມເອົາໃຈໃສ່ ກ່ຽວກັບບັນຫາບົດບາດ ຍິງ-ຊາຍ.



## ການສ້າງນະໂຍບາຍ ກ່ຽວກັບ ບົດບາດ ຍິງ-ຊາຍ.

1

**ອົງປະກອບທີ່ໜຶ່ງຂອງຍຸດທະສາດແມ່ນການສ້າງນະໂຍບາຍບົດບາດ ຍິງ-ຊາຍ ຂອງຄະນະ ກຳມາທິການແມ່ນ້ຳຂອງສາກົນ.** ຊຶ່ງມັນຈະເປັນບ່ອນອີງ ແລະ ສິ່ງອຳນວຍຄວາມສະດວກໃນການກຳໜົດ ແລະ ປັບປຸງບັນດາເປົ້າໝາຍ, ການພັດທະນາສະຖາບັນ ແລະ ຂະບວນການພັດທະນາ ເພື່ອສະທ້ອນ ໃຫ້ເຫັນເຖິງແນວຄວາມຄິດ ແລະ ບູລິມະສິດ ຂອງທັງສອງເພດ, ແມ່ຍິງ ແລະ ຜູ້ຊາຍ. ສິ່ງເຫລົ່ານີ້, ຈະເປັນການປະກອບສ່ວນເຂົ້າໃນພາລະກິດ ເພື່ອລຸດຜ່ອນຄວາມບໍ່ສະເໝີພາບທາງດ້ານ ບົດບາດ ຍິງ-ຊາຍ  ແລະ ຄວາມພະຍາຍາມໃນການພັດທະນາ ແລະ ຄຸ້ມຄອງນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງຕ່າງໆ.

## ການສະໜັບສະໜູນຈາກອົງການ

2

**ອົງປະກອບທີ່ສອງຂອງຍຸດທະສາດ ບົດບາດ ຍິງ-ຊາຍຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ລວມມີການໄດ້ຮັບການສະໜັບສະໜູນ ແລະ ຄວາມຮັບຜິດຊອບຈາກການນຳ ແລະ ຜູ້ບໍລິຫານຂັ້ນສູງ ຂອງອົງການ.** ສິ່ງເຫລົ່ານີ້ ແມ່ນໄດ້ປະຕິບັດໂດຍວິທີ ການຈັດງານ ແລະ ພິທີຕ່າງໆ ເພື່ອເພີ້ມຄວາມ ເຂົ້າໃຈກ່ຽວກັບ ບົດບາດ ຍິງ-ຊາຍ ໃກ້ແກ່ສະພາມົນຕີ ແລະ ຄະນະກຳມາທິການຮ່ວມ ຂອງຄະນະ ກຳມາທິການແມ່ນ້ຳຂອງສາກົນ ແລະ ບັນດາ ພະນັກງານອາວຸໂສ ຂອງກອງເລຂາຄະນະກຳມາທິການ ແມ່ນ້ຳຂອງສາກົນ, ພ້ອມທັງຜູ້ຕັດສິນບັນຫາຂອງບັນດາ ກະຊວງ ແລະ ກົມກອງ ຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງກັບຊັບພະຍາກອນນ້ຳໃນບັນດາປະເທດພາຄີຊະມາຊິກ.

## ການສ້າງຈິດສຳນຶກ ກ່ຽວກັບ ບົດບາດ ຍິງ-ຊາຍ ພາຍໃນອົງການ

3

**ເພື່ອເຮັດໃຫ້ເປັນສິ່ງກະຕຸ້ນ ໃຫ້ມີການປ່ຽນແປງ ທຳນຽມການປະຕິບັດຂອງອົງການເທື່ອລະກ້າວ,** ການຝຶກອົບຮົມ ຫລື ການຈັດພິທີຕ່າງໆ ເພື່ອສ້າງຈິດສຳນຶກ ກ່ຽວກັບ ບົດບາດ ຍິງ-ຊາຍ ຕ້ອງໄດ້ຖືກ ຈັດຂື້ນຢ່າງເປັນປົກກະຕິໃຫ້ແກ່ບັນດາ ພະນັກງານໃນທຸກໆລະດັບ ຂອງບັນດາກະຊວງ ແລະ ກົມກອງຂອງຂະແໜງການທີ່ກ່ຽວຂ້ອງຕ່າງໆ, ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ແລະ ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ.

## ການສ້າງຄວາມສາມາດດ້ານ ບົດບາດຍິງ-ຊາຍ ແລະ ການພັດທະນາ

4

**ການເສີມສ້າງຄວາມອາດສາມາດດ້ານ ບົດບາດ ຍິງ-ຊາຍ ແລະ ການພັດທະນາ ໄດ້ຖືກເນັ້ນໜັກ ໃນຖານະທີ່ເປັນພາກສ່ວນໜຶ່ງ ທີ່ສຳຄັນຂອງແຜນຍຸດທະສາດ ບົດບາດ ຍິງ-ຊາຍ.** ໜ້າວຽກນີ້ ປະກອບດ້ວຍ ການຈັດການຝຶກອົບຮົມ ກ່ຽວກັບການວາງແຜນທີ່ເອົາໃຈໃສ່ບັນຫາ ບົດບາດ ຍິງ-ຊາຍ ແລະ ການວິເຄາະບົດບາດ ຍິງ-ຊາຍ ໃຫ້ແກ່ພະນັກງານວິຊາການ ຂອງ ກອງເລຂາຄະນະກຳມາທິການ ແມ່ນ້ຳຂອງສາກົນ, ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ, ກະຊວງ ແລະ ກົມກອງຂອງຂະແໜງການ ທີ່ກ່ຽວຂ້ອງຕ່າງໆ ແລະ ພະນັກງານວິຊາການໃນລະດັບແຂວງ; ການປະສານງານ ແລະ ການຈັດຕັ້ງ ປະຕິບັດບັນດາໂຄງການທົດລອງຕ່າງໆ ໃນບັນດາກະຊວງ ແລະກົມກອງທີ່ຖືກຄັດເລືອກເພື່ອເຂົ້າຮ່ວມ ຝຶກອົບຮົມ ແລະ ການຝຶກຫັດຕົວຈິງ ກ່ຽວກັບການວິເຄາະ ບົດບາດ ຍິງ-ຊາຍ; ແລະ ການປະສານງານ ສຳຫລັບການສຶກສາຕໍ່ໃນລະດັບປະລິນຍາໂທ, ການຄົ້ນຄ້ວາ ແລະ ການຝຶກອົບຮົມ ກ່ຽວກັບ ບົດບາດ ຍິງ-ຊາຍໃຫ້ແກ່ບັນດາພະນັກງານຫລັກແຫລ່ງຂອງບັນດາປະເທດພາຄີສະມາຊິກ.

## ອົງການທີ່ມີຄວາມເອົາໃຈໃສ່ດ້ານ ບົດບາດ ຍິງ-ຊາຍ

5

**ອົງປະກອບທີ່ຫ້າຂອງແຜນຍຸດທະສາດ ບົດບາດ ຍິງ-ຊາຍ ຂອງກອງເລຂາຄະນະກຳມາທິການ ແມ່ນ້ຳຂອງສາກົນ ແມ່ນ ການກຳໜົດໂຄງຮ່າງການຈັດຕັ້ງ ແລະ ລະບຽບຫລັກການຕ່າງໆ ຂອງອົງການ ໃຫ້ມີການເອົາໃຈໃສ່ ກ່ຽວກັບບົດບາດ ຍິງ-ຊາຍ.** ໃນນີ້ ປະກອບດ້ວຍການສ້າງຕັ້ງຄະນະຊີ້ນຳປະຈຳກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ຈຸດປະສານງານ ບົດບາດ ຍິງ-ຊາຍ ຢູ່ບັນດາ ກະຊວງ ແລະ ກົມກອງທີ່ກ່ຽວຂ້ອງຕ່າງໆ ຂອງບັນດາປະເທດພາຄີສະມາຊິກ ບ່ອນທີ່ມີຄວາມເໝາະສົມ. ໃນຕໍ່ໜ້າ ສິ່ງເຫລົ່ານີ້ຈະເປັນການຮັບປະກັນ ໃຫ້ສະມາຊິກຂອງຄະນະຊີ້ນຳຫລືຈຸດປະສານງານ ບົດບາດ ຍິງ-ຊາຍ ໄດ້ເຂົ້າຮ່ວມໃນຄະນະຕັດສິນບັນຫາທີ່ສຳຄັນຕ່າງໆ. ພ້ອມກັນນັ້ນ, ບັນດາຄູ່ມື ໃນການຄຸ້ມຄອງ ບໍລິຫານໂຄງການ ໃນພາກພື້ນແມ່ນ້ຳຂອງ ແລະ ທິດທາງຂອງໂຄງການຕ່າງໆ ແມ່ນຕ້ອງໄດ້ເອົາໃຈໃສ່ ກ່ຽວກັບບັນຫາເລື້ອງ ບົດບາດ ຍິງ-ຊາຍ. ຄວນມີການສ້າງຖານຂໍ້ມູນແບບມີການແບ່ງແຍກຂໍ້ມູນຕາມເພດໃຫ້ແກ່ແຜນງານ ແລະ ໂຄງການ ຂອງກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ກະຊວງ ແລະ ກົມກອງຂອງຂະແໜງການທີ່ກ່ຽວຂ້ອງຕ່າງໆ ໂດຍການຈັດຝຶກອົບຮົມໃຫ້ແກ່ບັນດາພະນັກງານ ທີ່ຮັບຜິດຊອບຢ່າງເໝາະສົມ.

# ເຄື່ອງມືສຳຫລັບການຈັດຕັ້ງປະຕິບັດວຽກງານ ບົດບາດ ຍິງ-ຊາຍ

6

**ຍຸດທະສາດທີ່ໄດ້ຖືກກຳໜົດຂຶ້ນ ເປັນອັນສຸດທ້າຍ ແມ່ນການຈັດຫາວິທີການ ແລະ ຄູ່ມືທີ່ຈຳເປັນສຳຫລັບການຈັດຕັ້ງປະຕິບັດການພັດທະນາໂດຍມີຄວາມເອົາໃຈໃສ່ ກ່ຽວກັບບັນຫາ ບົດບາດ ຍິງ-ຊາຍ.**
ສິ່ງເຫລົ່ານີ້ ແມ່ນລວມທັງການສ້າງ ແລະ ເຜີຍແຜ່ "ປື້ມຄູ່ມືກ່ຽວກັບການເຊື່ອມ ບົດບາດ ຍິງ-ຊາຍ ເຂົ້າໃນການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນນ້ຳ ຢູ່ໃນພາກພື້ນແມ່ນ້ຳຂອງຕອນລຸ່ມ" ໃຫ້ເປັນ ພາສາຂອງ ບັນດາປະເທດພາຄີສະມາຊິກ ແລະ ພ້ອມກັນນັ້ນ ຍັງຕ້ອງມີການປັບປຸງ ແລະ ແຈກຢາຍ ປື້ມຄູ່ມືສຳຫລັບ ການເຊື່ອມ ບົດບາດ ຍິງ-ຊາຍ ຊຶ່ງມີລາຍການ ເພື່ອກວດສອບ ແລະ ຕິດຈາມຢ່າງລະອຽດ. ■

ການຈັດຕັ້ງປະຕິບັດ ບັນດາອົງປະກອບຂອງຍຸດທະສາດເຫລົ່ານີ້ ຈະເປັນການປະກອບສ່ວນເຮັດໃຫ້ໄດ້ຮັບຄວາມສະເຫມີພາບ ແລະ ຄວາມເປັນທັມໃນທັງສາມດ້ານ ຂອງການພັດທະນາ ແບບຍືນຍົງ ໃນຂົງເຂດອ່າງແມ່ນ້ຳຂອງ: ດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ການພັດທະນາສັງຄົມ ໃຫ້ແກ່ຄົນ ລຸ້ນຕໍ່ໆໄປ. ■





Mekong River Commission

Cambodia • Lao PDR • Thailand • Viet Nam

www.**mrcmekong**.org

**Office of the Secretariat in Vientiane (OSV)**

Office of the Chief Executive Officer

184 Fa Ngoum Road,

P.O. Box 6101, Vientiane, Lao PDR

Tel: (856-21) 263 263

Fax: (856-21) 263 264